ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 1671/ກທຄວ

ນະຄອນຫລວງວຽງຈັນ,ວັນທີ 14 ພະຈິກ 2017

ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າແຂວງ

ເລື່ອງ: ໃຫ້ກວດກາຄືນສຳເນົາເອກະສານຂຶ້ນທະບຽນວິສາຫະກິດ ທີ່ກົມໄດ້ສົ່ງໃຫ້ໃນໄລຍະຜ່ານມາ

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເກັບກຳ ແລະ ສຳຫລວດ ຖານລາຍຮັບງົບປະມານຄືນໃໝ່ໃນຂອບເຂດທົ່ວປະເທດ ສະບັບເລກທີ 40/ນຍ, ລົງວັນທີ 29 ກັນຍາ 2016 ແລະ ທິດຊີ້ນຳ ຂອງທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 23/10/2016;
- ອີງຕາມແຈ້ງການກ່ຽວກັບຂອບເຂດຄວາມຮັບຜິດຊອບ ໃນການຂຶ້ນທະບຽນວິສາຫະກິດ ສະບັບເລກທີ 1944/ອຄ.ທຄວ, ລົງວັນທີ 20 ຕຸລາ 2014;
- ອີງຕາມເອກະສານກ່ຽວກັບການມອບສຳເນົາໃບທະບຽນວິສາຫະກິດ ຂອງວິສາຫະກິດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ເລກທີ0233/ສລທ, 26/3/2012

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ(ທຄວ) ຖືເປັນກຽດແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດກ່ຽວກັບການນຳໃຊ້ສຳເນົາໃບທະບຽນວິສາຫະກິດ ທີ່ທາງກົມ ທຄວ ໄດ້ສົ່ງໃຫ້ແຂວງໃນໄລຍະຜ່ານມາ ດັ່ງນີ້:

1. ໃຫ້ກວດກາຄືນຫົວໜ່ວຍວິສາຫະກິດໃດ ແຂວງໄດ້ປ່ຽນແປງທະບຽນວິສາຫະກິດ ທີ່ກົມ ທຄວ ໄດ້ຂຶ້ນທະບຽນວິສາຫະກິດຜ່ານມາໃຫ້ເກັບຮັກສາສຳເນົາໄວ້, ແຕ່ຕ້ອງແຈ້ງລາຍຊື່ໃຫ້ກົມ ທຄວ ເພື່ອລົບລ້າງອອກຈາກລະບົບໂປຣແກຣມຄຸ້ມຄອງທະບຽນວິສາຫະກິດ ເພື່ອຫລີກລ້ຽງການມີທະບຽນວິສາຫະກິດຊ້ຳຊ້ອນ;
2. ຫົວໜ່ວຍວິສາຫະກິດໃດ ແຂວງຍັງບໍ່ທັນໄດ້ປ່ຽນແປງທະບຽນວິສາຫະກິດ ໃຫ້ນຳສົ່ງສຳ ເນົາເອກະສານຂຶ້ນທະບຽນວິສາຫະກະກິດ ຄືນໃຫ້ກົມ ທຄວ ເພື່ອເກັບຮັກສາໄວ້ໃນລະບົບຖານຂໍ້ມູນວິສາຫະກິດ;
3. ກໍລະນີຍັງບໍ່ທັນເຂົ້າໃຈແຈ້ງ ໃຫ້ປະສານຫາເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງກົມ ທຄວ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຈັດຕັ້ງປະຕິບັດ.

ຫົວໜ້າກົມ

ດຣ.ສົມພວງ ພຽນພິນິດ

ຕິດຕໍ່ພົວພັນ:
- ທ່ານ ເບັ່ງຢ່າງ 02022516330

Scanned by CamScanner